**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ລັດຖະບານ** ເລກທີ 123 /ລບ

ນະຄອນຫຼວງວຽງຈັນ, ວັນທີ 16.02.2021.

# ດຳລັດ
# ວ່າດ້ວຍການສ້າງ ຄອບຄົວ ແລະ ບ້ານ ວັດທະນະທຳ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 12/ຖວທ, ລົງວັນທີ 7 ມັງກອນ 2021.

**ລັດຖະບານ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ໃນການຄຸ້ມຄອງ ແລະ ກວດກາ ວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມເປັນເອກະພາບ, ມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ກໍ່ສ້າງຮາກຖານການເມືອງໃຫ້ໜັກແໜ້ນເຂັ້ມແຂງ, ຊຸກຍູ້ການພັດທະນາດ້ານ ວັດຖຸ ແລະ ຈິດໃຈ ຂອງຄອບຄົວ ແລະ ບ້ານ ໃຫ້ດີຂຶ້ນ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວ ບັນດາເຜົ່າ, ສ້າງສະຕິ ເຄົາລົບ ແລະ ປະຕິບັດກົດໝາຍ, ອະນຸລັກຮັກສາ, ສົ່ງເສີມຄຸນຄ່າ ມູນເຊື້ອວັດທະນະທຳ ອັນດີງາມ ຂອງຊາດ, ຂອງເຜົ່າ, ເລືອກເຟັ້ນ ແລະ ຮັບເອົາສິ່ງຍອດຍິ່ງ ທີ່ສອດຄ່ອງທາງດ້ານວັດທະນະທຳຂອງຍຸກສະໄໝ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການສ້າງ ຄອບຄົວ ແລະ ບ້ານ ວັດທະນະທຳ

ຄອບຄົວວັດທະນະທຳ ແມ່ນ ຄອບຄົວ ທີ່ໄດ້ຮັບການຢັ້ງຢືນເປັນຄອບຄົວວັດທະນະທຳ ບົນພື້ນຖານການກວດກາ ແລະ ປະເມີນຜົນ ຕາມມາດຕະຖານ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ບ້ານວັດທະນະທຳ ແມ່ນ ບ້ານ ທີ່ໄດ້ຮັບການຢັ້ງຢືນເປັນບ້ານວັດທະນະທຳ ບົນພື້ນຖານການກວດກາ ແລະ ປະເມີນຜົນ ຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ການສ້າງ ຄອບຄົວ ແລະ ບ້ານ ວັດທະນະທຳ ແມ່ນຂະບວນການເຄື່ອນໄຫວໂຄສະນາສຶກສາອົບຮົມ, ແຕ່ງຕັ້ງຄະນະກຳມະການຮັບຜິດຊອບ, ກຳນົດເປົ້າໝາຍ, ເກັບກຳຂໍ້ມູນ, ກວດກາ ຕີລາຄາ

ປະເມີນຜົນ ແລະ ຢັ້ງຢືນເປັນ ຄອບຄົວ ແລະ ບ້ານ ວັດທະນະທຳ ຕາມມາດຕະຖານ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 3 ນະໂຍບາຍຂອງລັດກ່ຽວກັບວຽກງານການສ້າງຄອບຄົວ ແລະ ບ້ານ ວັດທະນະທຳ**

ລັດ ສົ່ງເສີມ ການສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ດ້ວຍການວາງ ນະໂຍບາຍ, ຍຸດທະສາດ, ແຜນການ, ໂຄງການ ແລະ ລະບຽບການ, ສ້າງ, ບຳລຸງບຸກຄະລາກອນ ແລະ ຕອບສະໜອງງົບປະມານ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມເຂັ້ມແຂງ ແລະ ຍືນຍົງ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນ ແລະ ເຂົ້າຮ່ວມໃນການສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ຢ່າງກວ້າງຂວາງ ແລະ ທົ່ວເຖິງ ເພື່ອໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ**

ການເຄື່ອນໄຫວວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ໃຫ້ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃນແຕ່ລະໄລຍະ;

2. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ຄວາມສາມັກຄີ, ຊີວິດການເປັນຢູ່ຂອງຄອບຄົວ ແລະ ບ້ານ ໄດ້ຮັບການພັດທະນາ;

3. ຮັບປະກັນ ການອະນຸລັກຮັກສາ, ປົກປັກຮັກສາ, ປົກປ້ອງ ແລະ ສົ່ງເສີມ ມູນເຊື້ອວັດທະນະທຳອັນດີງາມ ຂອງຊາດ ແລະ ຂອງເຜົ່າ;

4. ສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ບົນພື້ນຖານຄວາມຕື່ນຕົວ ສະໝັກໃຈ ແລະ ຄວາມມຸ່ງມາດປາຖະໜາ ຂອງຄອບຄົວ ແລະ ປະຊາຊົນ;

5. ມີຄວາມຍຸຕິທຳ, ໂປ່ງໃສ, ພາວະວິໄສ ແລະ ສາມາດກວດສອບໄດ້;

6. ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ຢູ່ ສປປ ລາວ.

## ໝວດທີ 2
## ມາດຕະຖານຄອບຄົວວັດທະນະທຳ

**ມາດຕາ 6 ມາດຕະຖານຄອບຄົວວັດທະນະທຳ**

ຄອບຄົວວັດທະນະທຳ ຕ້ອງບັນລຸ ແປດສິບສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານການສ້າງຄອບຄົວວັດທະນະທຳ.

ມາດຕະຖານການສ້າງຄອບຄົວວັດທະນະທຳ ມີ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ກົດໝາຍ, ເຂົ້າຮ່ວມຂະບວນການ ພາຍໃນບ້ານ;

2. ຄອບຄົວອົບອຸ່ນ, ກ້າວໜ້າ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ;

3. ການຜະລິດ, ດຳເນີນທຸລະກິດ, ການສຶກສາຮ່ຳຮຽນ ຫຼື ມີວຽກເຮັດງານທຳ.

**ມາດຕາ 7 ມາດຕະຖານເຄົາລົບ ແລະ ປະຕິບັດ ກົດໝາຍ, ເຂົ້າຮ່ວມຂະບວນການ ພາຍໃນບ້ານ**

ມາດຕະຖານເຄົາລົບ ແລະ ປະຕິບັດ ກົດໝາຍ, ເຂົ້າຮ່ວມຂະບວນການ ພາຍໃນບ້ານ ມີ ດັ່ງນີ້:

1. ປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ຊຶ່ງສະມາຊິກຄອບຄົວບໍ່ຖືກລົງວິໄນ ຢູ່ສະຖານທີ່ເຮັດວຽກ, ສະຖານການສຶກສາ ແລະ ຢູ່ພາຍໃນບ້ານ ຫຼື ຖືກລົງໂທດ ຕາມກົດໝາຍ;

2. ຕິດທຸງຊາດໃນວັນສຳຄັນ ຂອງພັກ ແລະ ຂອງຊາດ;

3. ເຂົ້າຮ່ວມໃນການເຄື່ອນໄຫວກິດຈະກຳທາງດ້ານສິລະປະວັດທະນະທຳ ຢູ່ພາຍໃນບ້ານ ແລະ ກິລາ-ກາຍຍະກຳ ຢ່າງຖືກຕ້ອງ, ສອດຄ່ອງ ແລະ ເປັນປົກກະຕິ;

4. ປະຕິບັດຕາມແບບແຜນດຳລົງຊີວິດທີ່ສີວິໄລ, ກ້າວໜ້າ ເປັນຕົ້ນ ການແຕ່ງດອງ, ການສົ່ງສະການ, ບຸນປະເພນີ ຕາມລະບຽບການທີ່ກ່ຽວຂ້ອງ;

5. ເຂົ້າຮ່ວມການປົກປັກຮັກສາ ປູສະນີຍະສະຖານ, ຮ່ອງຮອຍປະຫວັດສາດ, ທຳມະຊາດ, ທັດສະນີຍະພາບ ຂອງທ້ອງຖິ່ນ;

6. ປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນ ການເກັບມ້ຽນ, ການຖິ້ມຂີ້ເຫຍື້ອ ແລະ ສິ່ງເສດເຫຼືອຕ່າງໆ ຕາມລະບຽບການທີ່ກ່ຽວຂ້ອງ;

7. ເຂົ້າຮ່ວມການເຄື່ອນໄຫວວຽກງານ ເພື່ອສົ່ງເສີມທາງດ້ານວັດທະນະທຳ-ສັງຄົມ ເປັນຕົ້ນ ການບໍລິຈາກ, ການສົ່ງເສີມບົດບາດຍິງ-ຊາຍ, ການຕອບແທນບຸນຄຸນ, ການສົ່ງເສີມ ການສຶກສາ ແລະ ພອນສະຫວັນ;

8. ປະຕິບັດຕາມລະບຽບການ ກ່ຽວກັບ ສຸຂານາໄມ, ຄວາມປອດໄພທາງດ້ານສະບຽງອາຫານ, ການກັນ ແລະ ຄວບຄຸມພະຍາດ;

9. ປະຕິບັດຕາມລະບຽບການ ກ່ຽວກັບການປ້ອງກັນຄວາມສະຫງົບ ແລະ ການປ້ອງກັນອັກຄີໄພ;

10. ເຄົາລົບ ແລະ ປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພໃນການສັນຈອນ ເປັນຕົ້ນ ການນຳໃຊ້ພື້ນທີ່ຖະໜົນ ຫຼື ປ່າທາງ ໂດຍບໍ່ໄດ້ຮັບອະນຸຍາດ.

**ມາດຕາ 8 ມາດຕະຖານຄອບຄົວອົບອຸ່ນ, ກ້າວໜ້າ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ**

ມາດຕະຖານຄອບຄົວອົບອຸ່ນ, ກ້າວໜ້າ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ມີ ດັ່ງນີ້:

1. ເອົາໃຈໃສ່ເບິ່ງແຍງລ້ຽງດູສະມາຊິກໃນຄອບຄົວ ເປັນຕົ້ນ ຜູ້ອາຍຸສູງ, ເດັກນ້ອຍ, ຄົນພິການ;

2. ປະກອບສ່ວນໃນການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນເວລາທີ່ພົບຄວາມຫຍຸ້ງຍາກ ແລະ ເກີດໄພພິບັດ;

3. ແຕ່ງດອງຖືກຕ້ອງຕາມຮີດຄອງປະເພນີ, ກົດໝາຍ, ລະບຽບການ, ເປັນຜົວໜຶ່ງເມຍດຽວ, ມີຄວາມ ສະເໝີພາບ ແລະ ຊື່ສັດບໍລິສຸດ;

4. ປະຕິບັດສິດສະເໝີພາບ ຍິງ-ຊາຍ, ບໍ່ໃຊ້ຄວາມຮຸນແຮງໃນຄອບຄົວ, ບໍ່ພົວພັນກັບສິ່ງເສບຕິດ, ບໍ່ຫຼິ້ນການພະນັນ, ບໍ່ເຊື່ອຖືງົມງວາຍ, ບໍ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ຄອບຄົວ, ສັງຄົມ ແລະ ອົງການປົກຄອງທ້ອງຖິ່ນ;

5. ເຂົ້າເປັນສະມາຊິກການປະກັນສຸຂະພາບ ແລະ ໄດ້ຮັບການດູແລເບິ່ງແຍງສຸຂະພາບ;

6. ຮູ້ອະນຸລັກ, ຮັກສາມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຂອງເຜົ່າ, ມີແບບແຜນການດຳລົງຊີວິດທີ່ສີວິໄລ ໃນຄອບຄົວ, ບ້ານ ແລະ ສັງຄົມ;

7. ປະຕິບັດສິດ ແລະ ພັນທະ ຂອງພົນລະເມືອງລາວ ລວມທັງປະກອບສ່ວນເຂົ້າໃນກິດຈະກຳ ແລະ ວຽກງານສາທະລະນະປະໂຫຍດ ໃນສັງຄົມ.

**ມາດຕາ 9 ມາດຕະຖານການຜະລິດ, ດຳເນີນທຸລະກິດ, ການສຶກສາຮ່ຳຮຽນ ຫຼື ມີວຽກເຮັດງານທຳ**

ມາດຕະຖານການຜະລິດ, ດຳເນີນທຸລະກິດ, ການສຶກສາຮ່ຳຮຽນ ຫຼື ມີວຽກເຮັດງານທຳ ມີ ດັ່ງນີ້:

1. ມີເຮືອນຢູ່ເປັນຂອງຕົນເອງ;

2. ປະກອບອາຊີບທີ່ຖືກຕ້ອງຕາມກົດໝາຍ, ຮູ້ຈັກທັນປຽນ ແລະ ພັດທະນາແບບແຜນການດຳລົງຊີວິດ ໄປສູ່ຄວາມກ້າວໜ້າ ແລະ ໝັ້ນຄົງ;

3. ມີວຽກເຮັດງານທຳ ທີ່ເໝາະສົມກັບອາຍຸກະສຽນ ໃນການອອກແຮງງານ;

4. ໄດ້ຮັບການສຶກສາ ຮ່ຳຮຽນ ຕາມເກນອາຍຸ;

5. ມີໄຟຟ້າ ແລະ ນຳໃຊ້ນ້ຳທີ່ສະອາດ;

6. ສາມາດເຂົ້າເຖິງ ຂໍ້ມູນ ຂ່າວສານ ກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ແລະ ວັດທະນະທຳດ້ວຍ ການຟັງ, ການເບິ່ງ ແລະ ວິທີການອື່ນ ຕາມຄວາມເໝາະສົມ ຢ່າງເປັນປົກກະຕິ.

## ໝວດທີ 3
## ມາດຕະຖານບ້ານວັດທະນະທຳ

**ມາດຕາ 10 ມາດຕະຖານບ້ານວັດທະນະທຳ**

ບ້ານວັດທະນະທຳ ຕ້ອງບັນລຸ ແປດສິບສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານການສ້າງບ້ານວັດທະນະທຳ.

ມາດຕະຖານການສ້າງບ້ານວັດທະນະທຳ ມີ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ;

2. ການເຄື່ອນໄຫວຊີວິດວັດທະນະທຳ ທີ່ອຸດົມສົມບູນ;

3. ພື້ນຖານເສດຖະກິດທີ່ໝັ້ນຄົງ ແລະ ມີການພັດທະນາ;

4. ສິ່ງແວດລ້ອມ ແລະ ທິວທັດ ທີ່ສວຍງາມ.

**ມາດຕາ 11 ມາດຕະຖານເຄົາລົບ ແລະ ປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ**

ມາດຕະຖານເຄົາລົບ ແລະ ປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ມີ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຢ່າງເປັນປົກກະຕິ ເພື່ອພັດທະນາ ແລະ ສ້າງບ້ານ ໃຫ້ກາຍເປັນບ້ານພົ້ນທຸກ ແລະ ບ້ານພັດທະນາ;

2. ສ້າງໜ່ວຍພັກບ້ານ ໃຫ້ກາຍເປັນໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ, ສ້າງອົງການຈັດຕັ້ງມະຫາຊົນ ຂອງບ້ານ ໃຫ້ໄດ້ນາມມະຍົດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

3. ປະຕິບັດສິດປະຊາທິປະໄຕປະຊາຊົນ, ປະຊາຊົນພາຍໃນບ້ານ ມີເງື່ອນໄຂເຂົ້າຮ່ວມຕິດຕາມ, ກວດກາ ການເຄື່ອນໄຫວຂອງອົງການຄຸ້ມຄອງບໍລິຫານລັດ ທີ່ເຄື່ອນໄຫວຢູ່ພາຍໃນບ້ານ;

4. ປະຕິບັດມາດຕະຖານ ຄວາມປອດໄພ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ປະຕິບັດສິດສະເໝີພາບ ຍິງ-ຊາຍ ບໍ່ມີການໃຊ້ຄວາມຮຸນແຮງໃນຄອບຄົວ, ບໍ່ມີການພົວພັນກັບສິ່ງເສບຕິດ, ບໍ່ມີການຫຼິ້ນການພະນັນ ແລະ ບໍ່ມີປະກົດການຫຍໍ້ທໍ້ອື່ນ ພາຍໃນບ້ານ;

5. ຈັດຕັ້ງປະຕິບັດວຽກງານໄກ່ເກ່ຍຂໍ້ຂັດແຍ່ງພາຍໃນບ້ານໄດ້ດີ.

**ມາດຕາ 12 ມາດຕະຖານການເຄື່ອນໄຫວຊີວິດວັດທະນະທຳທີ່ອຸດົມສົມບູນ**

ມາດຕະຖານການເຄື່ອນໄຫວຊີວິດວັດທະນະທຳທີ່ອຸດົມສົມບູນ ມີ ດັ່ງນີ້:

1. ມີອັດຕາສ່ວນຄອບຄົວວັດທະນະທຳ ກວມເອົາ ແປດສິບຫ້າສ່ວນຮ້ອຍ ຂຶ້ນໄປ;

2. ມີສະໂມສອນວັດທະນະທຳ, ຫ້ອງອ່ານ, ຫ້ອງມູນເຊື້ອ, ຫໍຂ່າວ, ລະບົບໂທລະໂຄ່ງ, ເດີ່ນກິລາ ໂດຍສອດຄ່ອງກັບເງື່ອນໄຂຂອງບ້ານ;

3. ມີການຈັດຕັ້ງ ປົກປັກຮັກສາ, ເສີມຂະຫຍາຍຮູບແບບການເຄື່ອນໄຫວສິລະປະວັດທະນະທຳ, ການພັກຜ່ອນຢ່ອນອາລົມ, ກິລາມວນຊົນ ອັນເປັນມູນເຊື້ອຂອງທ້ອງຖິ່ນ;

4. ປົກປັກຮັກສາ, ປ້ອງກັນຮ່ອງຮອຍປະຫວັດສາດ, ວັດທະນະທຳ ແລະ ທັດສະນີຍະພາບຂອງບ້ານ;

5. ມີສະມາຊິກພາຍໃນບ້ານ ຮຽນຈົບປະຖົມສຶກສາ ຂຶ້ນໄປ;

6. ມີອັດຕາສ່ວນເດັກນ້ອຍ ທີ່ຂາດສານອາຫານຫຼຸດລົງ ແລະ ໄດ້ຮັບວັກຊີນກັນພະຍາດຢ່າງຄົບຖ້ວນ ໃນແຕ່ລະປີ;

7. ບໍ່ມີການເຊື່ອຖືງົມງວາຍ ແລະ ປະຊາຊົນພາຍໃນບ້ານບໍ່ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ຄອບຄົວ, ສັງຄົມ ແລະ ອົງການປົກຄອງທ້ອງຖິ່ນ;

8. ສາມາດລະດົມການຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ສົ່ງເສີມການຕອບແທນບຸນຄຸນ;

9. ເອົາໃຈໃສ່ ແລະ ດູແລເບິ່ງແຍງ ຜູ້ອາຍຸສູງ, ເດັກນ້ອຍ, ຜູ້ທີ່ມີຜົນງານ, ຄົນພິການ, ຜູ້ທີ່ທຸກຍາກ, ອະນາຖາ ແລະ ຄົນທີ່ຍັງມີສະພາບຫຍຸ້ງຍາກ.

**ມາດຕາ 13 ມາດຕະຖານພື້ນຖານເສດຖະກິດທີ່ໝັ້ນຄົງ ແລະ ມີການພັດທະນາ**

ມາດຕະຖານພື້ນຖານເສດຖະກິດທີ່ໝັ້ນຄົງ ແລະ ມີການພັດທະນາ ມີ ດັ່ງນີ້:

1. ມີຜູ້ທີ່ຢູ່ໃນເກນອາຍຸອອກແຮງງານ ມີວຽກເຮັດງານທຳ ແລະ ມີລາຍຮັບທີ່ໝັ້ນຄົງ;

2. ມີລາຍຮັບສະເລ່ຍຕໍ່ຫົວຄົນ ສູງກວ່າລາຍຮັບສະເລ່ຍຕໍ່ຫົວຄົນຂອງ ເມືອງ, ເທດສະບານ, ນະຄອນ ທີ່ຕົນຂຶ້ນກັບ;

3. ມີອັດຕາສ່ວນຄອບຄົວທຸກຍາກ ຕໍ່າກວ່າອັດຕາສະເລ່ຍຄອບຄົວທຸກຍາກຂອງ ເມືອງ, ເທດສະບານ, ນະຄອນ ທີ່ຕົນຂຶ້ນກັບ;

4. ມີລະບົບເສັ້ນທາງຄົມມະນາຄົມ ທີ່ໄດ້ຮັບການພັດທະນາ ຊຶ່ງຮັບປະກັນການຂົນສົ່ງ ແລະ ການໄປມາ ໄດ້ຢ່າງສະດວກ;

5. ປະກອບສ່ວນ ໂຄສະນາ, ເຜີຍແຜ່, ຝຶກອົບຮົມ ກ່ຽວກັບການນໍາໃຊ້ວິທະຍາສາດ, ເຕັກໂນໂລຊີ ເຂົ້າໃນການຜະລິດ ແລະ ວຽກງານອື່ນ ພ້ອມທັງເສີມຂະຫຍາຍການຜະລິດທີ່ເປັນມູນເຊື້ອ ຂອງບ້ານ, ມີການຮ່ວມມື ແລະ ແລກປ່ຽນບົດຮຽນ ເຊິ່ງກັນ ແລະ ກັນ.

**ມາດຕາ 14 ມາດຕະຖານສິ່ງແວດລ້ອມ ແລະ ທິວທັດ ທີ່ສວຍງາມ**

ມາດຕະຖານສິ່ງແວດລ້ອມ ແລະ ທິວທັດ ທີ່ສວຍງາມ ມີ ດັ່ງນີ້:

1. ມີການເຄື່ອນໄຫວການຜະລິດ, ທຸລະກິດ ໂດຍປະຕິບັດ ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ;

2. ມີການເຄື່ອນໄຫວ ໂຄສະນາ ເຜີຍແຜ່ ແລະ ຍົກສູງຄວາມຮັບຮູ້ຂອງປະຊາຊົນ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ຢ່າງເປັນປົກກະຕິ;

3. ມີລະບົບ ສະໜອງນໍ້າສະອາດ ແລະ ລະບາຍນໍ້າເປື້ອນ;

4. ມີເຮືອນຢູ່ອາໄສ, ສິ່ງກໍ່ສ້າງສາທາລະນະປະໂຫຍດ, ປ່າຊ້າ ທີ່ສອດຄ່ອງກັບແຜນກໍານົດຂອງຜັງເມືອງ;

5. ມີການປັບປຸງ ແລະ ປົກປັກຮັກສາ ສະຖານທີ່ ເຄື່ອນໄຫວ ແລະ ບໍລິການສາທາລະນະ ໃຫ້ມີຄວາມສະອາດ ແລະ ຈົບງາມ;

6. ມີຈຸດເກັບມ້ຽນຂີ້ເຫຍື້ອ ຊົ່ວຄາວ;

7. ມີການຈັດຕັ້ງ ແລະ ເຂົ້າຮ່ວມການເຄື່ອນໄຫວ ກັນ ແລະ ຄວບຄຸມພະຍາດ ຢ່າງເຂັ້ມງວດ.

## ໝວດທີ 4
## ຂັ້ນຕອນການສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ

**ມາດຕາ 15 ຂັ້ນຕອນການສ້າງຄອບຄົວວັດທະນະທໍາ**

ການສ້າງຄອບຄົວວັດທະນະທໍາ ໃຫ້ປະຕິບັດ ຕາມຂັ້ນຕອນ ດັ່ງນີ້:

1. ໂຄສະນາສຶກສາອົບຮົມ ແລະ ພົບປະໂອ້ລົມກັບອົງການປົກຄອງບ້ານ, ພໍ່ແມ່ປະຊາຊົນ ເພື່ອສະເໜີ ຈຸດປະສົງ, ລະດັບຄາດໝາຍ ແລະ ຄວາມຮຽກຮ້ອງຕ້ອງການ ໃນການສ້າງຄອບຄົວວັດທະນະທໍາ;

2. ແຕ່ງຕັ້ງຄະນະກຳມະການຂັ້ນເມືອງ ໂດຍເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກ ອົງການປົກຄອງບ້ານ, ອົງການປົກຄອງຂັ້ນເມືອງ, ຫ້ອງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງວາງແຜນ, ເຜີຍແຜ່, ແນະນຳ, ກວດກາ ມາດຕະຖານ ໃນການສ້າງຄອບຄົວວັດທະນະທຳ;

3. ເກັບກຳຂໍ້ມູນຄອບຄົວເປົ້າໝາຍ ໃຫ້ລະອຽດ ແລະ ຊັດເຈນ ຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງດຳລັດສະບັບນີ້;

4. ກວດກາ ຕີລາຄາ, ປະເມີນຜົນ ດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ຂອງຄອບຄົວ ຕາມມາດຕະຖານ ຄອບຄົວວັດທະນະທຳ ເພື່ອລາຍງານໃຫ້ຂັ້ນເທິງ ຖັດຕົນ ພິຈາລະນາ;

5. ກຳນົດ ວັນ, ເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ ເພື່ອຈັດຕັ້ງພິທີມອບໃບຍັ້ງຢືນຄອບຄົວວັດທະນະທຳ ຢ່າງເປັນທາງການ.

**ມາດຕາ 16 ຂັ້ນຕອນການສ້າງບ້ານວັດທະນະທຳ**

ການສ້າງບ້ານວັດທະນະທຳ ໃຫ້ປະຕິບັດ ຕາມຂັ້ນຕອນ ດັ່ງນີ້:

1. ໂຄສະນາສຶກສາອົບຮົມ ແລະ ພົບປະໂອ້ລົມກັບອົງການປົກຄອງບ້ານ, ພໍ່ແມ່ປະຊາຊົນ ເພື່ອສະເໜີ ຈຸດປະສົງ, ລະດັບຄາດໝາຍ ແລະ ຄວາມຮຽກຮ້ອງຕ້ອງການ ໃນການສ້າງບ້ານວັດທະນະທຳ;

2. ແຕ່ງຕັ້ງຄະນະກຳມະການ ຂັ້ນແຂວງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຊຶ່ງປະກອບດ້ວຍ ຜູ້ຕາງໜ້າຈາກ ອົງການປົກຄອງຂັ້ນແຂວງ, ພະແນກທີ່ກ່ຽວຂ້ອງ, ອົງການປົກຄອງ ຂັ້ນເມືອງ ແລະ ຫ້ອງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງວາງແຜນ, ເຜີຍແຜ່, ແນະນຳ, ກວດກາ ມາດຕະຖານໃນການສ້າງບ້ານວັດທະນະທຳ;

3. ກຳນົດບ້ານເປົ້າໝາຍ ໂດຍຕິດພັນກັບຂະບວນການຕ່າງໆ ເຊັ່ນ ບ້ານຕ້ອງສ້າງໃຫ້ໄດ້ໜ່ວຍພັກ ເຂັ້ມແຂງ ປອດໃສ, ໝັກແໜ້ນ, ບັນລຸຄາດໝາຍ ສີ່ ກຸ່ມວຽກງານຂອງບ້ານ ແລະ ໄດ້ຮັບນາມມະຍົດທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ;

4. ເກັບກຳຂໍ້ມູນບ້ານເປົ້າໝາຍ ເປັນຕົ້ນ ທີ່ຕັ້ງຈຸດພິເສດ, ພູມສັນຖານ, ລະບົບການເມືອງພາຍໃນບ້ານ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຜົນສຳເລັດທາງດ້ານ ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ໂຄງລ່າງພື້ນຖານ ໃຫ້ຄົບຖ້ວນ;

5. ກວດກາ ຕີລາຄາ, ປະເມີນຜົນ ດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ ກ່ຽວກັບການຈັດຕັ້ງປະຕິບັດ ຕາມມາດຕະຖານການສ້າງບ້ານວັດທະນະທຳ ເພື່ອລາຍງານໃຫ້ຂັ້ນເທິງ ພິຈາລະນາ;

6. ກຳນົດ ວັນ, ເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ ເພື່ອຈັດຕັ້ງພິທີມອບໃບຍັ້ງຢືນບ້ານວັດທະນະທຳ ຢ່າງເປັນທາງການ.

## ໝວດທີ 5
## ການປະເມີນຜົນ, ການຍັ້ງຢືນ, ການຍ້ອງຍໍ ແລະ ການຖອນການຍັ້ງຢືນ

### ມາດຕາ 17 ການປະເມີນຜົນ

ການປະເມີນຜົນຄອບຄົວ ແລະ ບ້ານ ວັດທະນະທຳ ດຳເນີນເປັນ ສອງ ໄລຍະ ຄື:

- ໄລຍະທີໜຶ່ງ ຄະນະກຳມະການທີ່ກ່ຽວຂ້ອງ ລົງກວດກາ, ປະເມີນຜົນ ຕາມມາດຕະຖານຄອບຄົວ ແລະ ບ້ານ ໃຫ້ຄົບຖ້ວນ ກ່ອນທີ່ຈະສະເໜີຮັບຮອງເປັນຄອບຄົວ ແລະ ບ້ານ ວັດທະນະທຳ;

- ໄລຍະທີສອງ ພາຍຫຼັງທີ່ໄດ້ຮັບໃບຍັ້ງຢືນເປັນຄອບຄົວວັດທະນະທຳແລ້ວ ຄະນະກຳມະການທີ່ກ່ຽວຂ້ອງ ລົງກວດກາ, ປະເມີນຜົນ ຕາມມາດຕະຖານຄອບຄົວ ແລະ ບ້ານ ວັດທະນະທຳໃຫ້ຄົບຖ້ວນ ເປັນແຕ່ລະປີ.

### ມາດຕາ 18 ການຍັ້ງຢືນ

ການຍັ້ງຢືນ ໃຫ້ປະຕິບັດ ຕາມຂັ້ນຕອນ ດັ່ງນີ້:

1. ພາຍຫຼັງ ທີ່ໄດ້ກວດກາ ແລະ ປະເມີນຜົນ ຕາມມາດຕະຖານຄອບຄົວວັດທະນະທຳ ຕາມທີ່ໄດ້ກຳນົດໃນດຳລັດສະບັບນີ້ ຄະນະກຳມະການທີ່ກ່ຽວຂ້ອງ ສະເໜີຕໍ່ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ໂດຍຜ່ານການຮັບຮອງຂອງອົງການປົກຄອງບ້ານແລ້ວນຳສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ ຍັ້ງຢືນ ເປັນແຕ່ລະປີ;

2. ພາຍຫຼັງ ທີ່ໄດ້ກວດກາ ແລະ ປະເມີນຜົນ ຕາມມາດຕະຖານບ້ານວັດທະນະທຳ ຕາມທີ່ໄດ້ກຳນົດໃນດຳລັດສະບັບນີ້ ຄະນະກຳມະການທີ່ກ່ຽວຂ້ອງ ສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ໂດຍຜ່ານການຮັບຮອງຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ແລ້ວນຳສະເໜີຕໍ່ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ຍັ້ງຢືນ ເປັນແຕ່ລະປີ.

ສຳລັບ ບ້ານທີ່ໄດ້ຮັບການຍັ້ງຢືນ ເປັນບ້ານວັດທະນະທຳ ສາມາດຕິດຕັ້ງປ້າຍບ້ານວັດທະນະທຳຢູ່ສະຖານທີ່ ທີ່ເໝາະສົມ, ເບິ່ງເຫັນໄດ້ງ່າຍ ແລະ ບໍ່ກີດຂວາງການຈະລາຈອນ ຊຶ່ງຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 19 ການຍ້ອງຍໍ

ຄອບຄົວ ທີ່ໄດ້ຮັບການຍັ້ງຢືນເປັນຄອບຄົວວັດທະນະທຳໄດ້ ໃນໄລຍະ ສາມປີ ຕໍ່ເນື່ອງ, ຄະນະກຳມະການ ທີ່ກ່ຽວຂ້ອງ ສະເໜີຕໍ່ນາຍບ້ານ ໂດຍການຍັ້ງຢືນຈາກຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ເພື່ອສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາຕົກລົງ ຍ້ອງຍໍ ດ້ວຍຮູບການຕ່າງໆ.

ບ້ານ ທີ່ໄດ້ຮັບການຍັ້ງຢືນເປັນບ້ານວັດທະນະທຳໄດ້ ໃນໄລຍະ ສາມປີ ຕໍ່ເນື່ອງ, ຄະນະກຳມະການ ທີ່ກ່ຽວຂ້ອງ ສະເໜີຕໍ່ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ໂດຍການຍັ້ງຢືນຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ເພື່ອສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາຕົກລົງ ຍ້ອງຍໍ ດ້ວຍຮູບການຕ່າງໆ.

**ມາດຕາ 20 ການຖອນການຍັ້ງຢືນ**

ການຖອນການຍັ້ງຢືນ ໃຫ້ປະຕິບັດ ດັ່ງນີ້:

1. ສຳລັບ ຄອບຄົວ ທີ່ໄດ້ຮັບການຍັ້ງຢືນເປັນຄອບຄົວວັດທະນະທຳ ໃນໄລຍະ ໜຶ່ງປີ ຫຼື ສອງປີແລ້ວ ແຕ່ພາຍຫຼັງທີ່ໄດ້ມີການກວດກາ ແລະ ປະເມີນຜົນ ເຫັນວ່າ ຄອບຄົວດັ່ງກ່າວ ບໍ່ສາມາດຮັກສາການຍັ້ງຢືນຄອບຄົວວັດທະນະທຳໄດ້ ໃຫ້ຄະນະກຳມະການທີ່ກ່ຽວຂ້ອງ ສະເໜີຕໍ່ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ໂດຍຜ່ານອົງການປົກຄອງບ້ານ ແລ້ວນຳສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ ຖອນການຍັ້ງຢືນ;

2. ສຳລັບ ບ້ານ ທີ່ໄດ້ຮັບການຍັ້ງຢືນເປັນບ້ານວັດທະນະທຳ ໃນໄລຍະ ໜຶ່ງ ປີ ຫຼື ສອງປີ ແລ້ວ ແຕ່ພາຍຫຼັງທີ່ໄດ້ມີການກວດກາ ແລະ ປະເມີນຜົນ ເຫັນວ່າ ບ້ານດັ່ງກ່າວບໍ່ສາມາດຮັກສາການຍັ້ງຢືນເປັນບ້ານວັດທະນະທຳໄດ້ ໃຫ້ຄະນະກຳມະການທີ່ກ່ຽວຂ້ອງ ສະເໜີຕໍ່ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ໂດຍຜ່ານຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ແລ້ວນຳສະເໜີຕໍ່ ເຈົ້າແຂວງ, ເຈົ້ານະຄອນຫຼວງ ພິຈາລະນາ ຖອນການຍັ້ງຢືນ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 21 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງ ຄອບຄົວ ແລະ ບ້ານ ວັດທະນະທຳ ທີ່ຂັດກັບແນວທາງ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ບໍ່ສອດຄ່ອງກັບມູນເຊື້ອຮີດຄອງປະເພນີອັນດີງາມ ຂອງຊາດ ແລະ ຂອງເຜົ່າ;

2. ໂຄສະນາ ໃສ່ຮ້າຍປ້າຍສີ, ບິດເບືອນຄວາມຈິງ ກ່ຽວກັບການສ້າງ ຄອບຄົວ ແລະ ບ້ານ ວັດທະນະທຳ;

3. ນຳໃຊ້ ຈຸດປະສົງ ແລະ ລະດັບຄາດໝາຍ ການສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ເພື່ອຫາລາຍໄດ້ ຫຼື ຈັດຕັ້ງກິດຈະກຳ ທີ່ເປັນການຟູມເຟືອຍ ສິ້ນເປືອງ ຊັບສິນ ແລະ ເວລາ;

4. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ໃສ່ຮ້າຍປ້າຍສີ, ໝິ່ນປະໝາດ, ມີພຶດຕິກຳອື່ນ ທີ່ບໍ່ເໝາະສົມຕໍ່ປະຊາຊົນ ແລະ ພະນັກງານ ທີ່ກ່ຽວຂ້ອງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 22 ຂໍ້ຫ້າມ ສຳລັບເຈົ້າໜ້າທີ່ ແລະ ພະນັກງານຂອງລັດ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານຂອງລັດ ມີ ພຶດຕິກຳ ດັ່ງນີ້:

1. ຈັດຕັ້ງປະຕິບັດວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ທີ່ຂັດກັບແນວທາງ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ບໍ່ສອດຄ່ອງກັບມູນເຊື້ອຮີດຄອງປະເພນີອັນດີງາມ ຂອງຊາດ ແລະ ຂອງເຜົ່າ;

2. ສວຍໃຊ້ໜ້າທີ່ ຕຳແໜ່ງ, ບັງຄັບ, ນາບຊູ່, ໝິ່ນປະໝາດ ບຸກຄົນ, ຄອບຄົວ, ການຈັດຕັ້ງ ຮາກຖານທີ່ປະຕິບັດວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;

3. ສ້າງກົດຈະກຳທີ່ມີລັກສະນະສັບສົນ, ຫຼາຍຂັ້ນຕອນ ສິ້ນເປືອງ ຟູມເຟືອຍ ໃນການສ້າງ ຄອບຄົວ ແລະ ບ້ານ ວັດທະນະທຳ;

4. ປະຕິບັດໜ້າທີ່ດ້ວຍຄວາມລຳອຽງ, ປະໝາດ, ເລີ່ນເລີ້, ເມີນເສີຍ, ບໍ່ມີຄວາມຍຸຕິທຳ, ຂາດຄວາມຮັບຜິດຊອບ ແລະ ຈັນຍາບັນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ ວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ

### ມາດຕາ 23 ອົງການຄຸ້ມຄອງ ແລະ ກວດກາ ວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ປະກອບດ້ວຍ:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ;
4. ອົງການປົກຄອງບ້ານ.

### ມາດຕາ 24 ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ໃນການຄຸ້ມຄອງວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ, ແຜນການ, ໂຄງການ ແລະ ວິທີການຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ຄູ່ມືທາງດ້ານວິຊາການ, ແບບສອບຖາມ, ຖານຂໍ້ມູນ ກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;

4. ສ້າງ ແລະ ກຳນົດແຜນງົບປະມານ, ແຜນສ້າງ ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບ ວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;

5. ຊີ້ນໍາ, ຊຸກຍູ້, ຕິດຕາມ ກວດກາ ການເຄື່ອນໄຫວ ກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ ຂອງພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວຂັ້ນແຂວງ;

6. ຮັບ ແລະ ແກ້ໄຂ ຄໍາສະເໜີຂອງປະຊາຊົນ ກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ ທີ່ມີລັກສະນະກວມລວມໃນຂອບເຂດທົ່ວປະເທດ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ບໍ່ ສອດຄ່ອງກັບມູນເຊື້ອວັດທະນະທໍາອັນດີງາມ ຂອງຊາດ ແລະ ຂອງເຜົ່າ;

7. ປະສານສົມທົບ ກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນ ການຈັດຕັ້ງປະຕິບັດວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ;

8. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສ້າງ ຄອບຄົວ ແລະ ບ້ານ ວັດທະນະທໍາ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວ ກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ ພະແນກຖະແຫຼງຂ່າວ, ວັດທະ ນະທໍາ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ, ແຜນການ, ໂຄງການກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ;

2. ອອກລະບຽບການ ຄຸ້ມຄອງ ແລະ ແກ້ໄຂປາກົດການຫຍໍ້ທໍ້ ກ່ຽວກັບວຽກງານສ້າງ ຄອບຄົວ ແລະ ບ້ານ ວັດທະນະທໍາ;

3. ຂຶ້ນແຜນງົບປະມານ, ແຜນສ້າງ ບໍາລຸງ ແລະ ສັບຊ້ອນພະນັກງານ-ລັດຖະກອນ ໃຫ້ ສອດຄ່ອງ ເໝາະສົມກັບຄວາມຕ້ອງການຂອງວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ;

4. ຊີ້ນໍາ, ຊຸກຍູ້, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ;

5. ສະເໜີ ອົງການປົກຄອງຂັ້ນແຂວງ ເພື່ອພິຈາລະນາ ຢັ້ງຢືນ, ຍ້ອງຍໍ ຫຼື ຖອນການຢັ້ງຢືນ ບ້ານວັດທະນະທໍາ ຕາມແຕ່ລະກໍລະນີ;

6. ຮັບ ແລະ ແກ້ໄຂ ຄໍາສະເໜີຂອງປະຊາຊົນ ກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ ໃນຂອບເຂດແຂວງ, ນະຄອນຫຼວງຕົນ;

7. ປະສານສົມທົບກັບພະແນກການ ແລະ ອົງການທຽບເທົ່າທີ່ກ່ຽວຂ້ອງ ໃນການຈັດຕັ້ງ ປະຕິບັດ ວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ;

8. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ ຕາມການມອບໝາຍຂອງຂັ້ນເທິງ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ໂຄງການ ກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;

2. ຂຶ້ນແຜນງົບປະມານ, ແຜນສ້າງ ບຳລຸງ ແລະ ສັບຊ້ອນພະນັກງານ-ລັດຖະກອນ ໃຫ້ສອດຄ່ອງ ເໝາະສົມກັບຄວາມຕ້ອງການຂອງວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;

3. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານສ້າງຄອບຄົວ ແລະ ບ້ານວັດທະນະທຳ ຂອງອົງການປົກຄອງບ້ານ;

4. ສະເໜີ ອົງການປົກຄອງຂັ້ນເມືອງ ເພື່ອພິຈາລະນາ ຢັ້ງຢືນ, ຍ້ອງຍໍ ຫຼື ຖອນການຢັ້ງຢືນຄອບຄົວວັດທະນະທຳ ຕາມແຕ່ລະກໍລະນີ;

5. ປະສານສົມທົບກັບຫ້ອງການ ແລະ ອົງການທຽບເທົ່າທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ເຜີຍແຜ່ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;

2. ຕິດຕາມ ກວດກາ ການປະຕິບັດວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ພາຍໃນບ້ານຕົນ;

3. ປະສານສົມທົບກັບ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການສະເໜີ ຮັບຮອງ, ຍ້ອງຍໍ, ຖອນການຢັ້ງຢືນ ຄອບຄົວ ແລະ ບ້ານ ວັດທະນະທຳ;

4. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ໃຫ້ອົງການປົກຄອງຂັ້ນເມືອງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ຂະແໜງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງ ເຜີຍແຜ່, ເຊື່ອມຊຶມ ດຳລັດສະບັບນີ້ ພ້ອມທັງເຂົ້າຮ່ວມຈັດຕັ້ງປະຕິບັດຕາມ ຄາດໝາຍ ທີ່ຂະແໜງການຂອງຕົນ ວາງອອກ;

2. ເຂົ້າຮ່ວມການ ກວດກາ, ປະເມີນຜົນ ການສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ຕາມ ມາດຕະຖານ ວິຊາການຂອງຂະແໜງການຕົນ ເພື່ອສ້າງຄວາມເຂັ້ມແຂງໃຫ້ຄອບຄົວ ແລະ ບ້ານ ວັດທະນະທຳ ໃນແຕ່ລະໄລຍະ;

3. ມີການປະສານສົມທົບວຽກງານ ກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ໃນວຽກງານ ສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 29 ເນື້ອໃນການກວດກາວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ**

ການກວດກາວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ, ລະບຽບການ ແລະ ມາດຕະຖານ ກ່ຽວກັບການສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;

2. ການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ການເຄື່ອນໄຫວບັນດາກິດຈະກຳຊຸກຍູ້ ການສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;

4. ບາດກ້າວ, ຂັ້ນຕອນການສ້າງ ແລະ ປະຕິບັດແຜນການ ກ່ຽວກັບການສ້າງຄອບຄົວ ແລະ ບ້ານວັດທະນະທຳ.

**ມາດຕາ 30 ຮູບການກວດກາວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ**

ການກວດກາວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນຕາມແຜນການ ຢ່າງ ເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກ ກວດກາຮູ້ລ່ວງໜ້າ.

## ໝວດທີ 8

## ບົດບັນຍັດສຸດທ້າຍ

**ມາດຕາ 31 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບ ກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 32 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ